## ປະຊາທິປະໄຕ ກ່ອນຈະໄດ້ຕ້ອງຜ່ານທຸກຜ່ານສຸກສາກ່ອນ

ໃນທິດທຳອິດຂອງເດືອນ-11-ປີ-2008-ນັ້ນເປັນທິດທີ່ກິດຈະກັມທາງການເມືອງໃນສະຫະຣັຖອະເມຣິກາມາເຖິງຈຸດສູງສຸດເພາະການເລືອກຕັ້ງປະທານາທິບໍດີຄົນໃໝ່ຈະມາເຖິງວັນລົງຄະແນນສຽງ ໃນວັນຄານທີ-4-11-08-ສ່ວນປະຊາທິປະໄຕໃນສະຫະຣັຖອະເມຣິກາ ມີລັກສະນະສະເພາະຕົວທີ່ເປັນພົນ ຂອງວິວັທນາການສັງຄົມ ສ່ວນປະຊາທິປະໄຕທີ່ຍ່າງໄປເຖິງເສັ້ນທາງປະວັດສາດມານານເຖິງ-230-ປີ ນັບຈາກວັນທີ-4-11-ປີ-1776 ອັນເປັນປີທີ່ສະຫະຣັຖອະເມຣິກາ ປະກາດເອກຣາຊຈາກການປົກຄອງອານານິຄົມ ຂອງອັງກິດມາເຖິງປີ-2008-ນີ້ ຊາວອະເມຣິກາມີຣັຖທັມນູນພຽງສະບັບດຽວ ມີການແກ້ໄຂຣັຖທັມນູນ-18-ຄັ້ງຣວມ-27-ມາຕຣາ ເກີດສົງຄາມກາງເມືອງນຶ່ງຄັ້ງ ປະທານາທິບໍດີຖືກຂ້າ-4-ຄົນ-Abraham Lincoln-1865-john Grfield-1881-william Mckinley-1901 john f hennedy-1963-ປະທານາທິບໍດີອີກ-4-ຄົນ ຖືກຄົນຮ້າຍບຸກພະຍາຍາມຂ້າ ( franklin-Roosevelt-Harry-Truman-Gerald-ford-Ronald-reagan)ນັກຕໍ່ສູ້ເພື່ອສິດທິຂອງຄົນຜິວດຳຖືກສັງຫານ-1-ຄົນ ( Martinher kig jr ) ຜູ້ສມັກຊີງຕຳແໜ່ງ ປະທານາທິບໍຣີອີກ-2-ຄົນ ຄົນນຶ່ງຖືກຂ້າ(Robert f-kennedy) ອີກຄົນນຶ່ງຕ້ອງພິການໄປຕຣອດຊີວິດ ເພາະຄວາມພະຍາຍາມຂ້າບໍ່ສຳເດັດ(George Wallace)

ແລະມາຮອດວັນທີ-4-11-2008-ນີ້ ຊາວອະເມຣິກັນໄດ້ເລືອກປະທານາທິບໍດີຄົນລ້າສຸດເປັນຄົນທີ-44-ສ່ວນປະຊາທິປະໄຕໃນອະເມຣິກາ ມີຜ່ານການທົດສອບຂອງການເວລາໃນປະວັດສາດມາຍາວນານ ຈິ່ນກາຍເປັນຕົ້ນແບບຂອງປະຊາທິປະໄຕ ຂອງໂລກ ແຕ່ການເບິ່ງປະຊາທິປະໄຕໃນອະເມຣິການັ້ນ ເມື່ອເບິ່ງໃຫ້ຄົບເຖິງ-230-ປີ ທີ່ຜ່ານມາ ກໍ່ຈະພົບແບບຢ່າງຂອງກະບວນການປະຊາທິປະໄຕ ທີ່ໃຫ້ຮູ້ວ່າມີປະກົດການປະວັດສາດຫລາຍເຣື້ອງ ທີ່ປະເທດທີ່ກຳລັງພະຍາຍາມ ນຳເອົາທິດທາງໃນການສ້າງປະຊາທິປະໄຕ ຢູ່ໃນສະຫະຣັຖອະເມຣິກາ ກ່ອນຈະຕ້ອງຮັບຮູ້ປະຊາທິປະໄຕ ໃນອະເມຣິການັ້ນຕ້ອງຜ່ານທຸກຜ່ານສຸກສາກ່ອນຕ້ອງຜ່ານທາງດ້ານຈິດໃຈແລະປັນຍາພ້ອມໆກັນໄປ ກ່ອນປະເຊີນກັບຄວາມຂັດແຍ່ງແລະການຕໍ່ສູ້ ຕ້ອງດຳເນີນຄວາມຮ່ວມມືສ້າງກະບວນການ ການສຶກສາ
ແລະອາໃສຄວາມຈະເຣີນ

ທາງວັດຖຸ ປະສານຄວາມຈະເຣີນທາງຈິດໃຈແລະທາງຫ່າງກາຍ ພອ້ມຜ່ານການສາຣະພັດປະກົດການຕ່າງໆ ທີ່ລວບລວມກັນເອີ້ນວ່າ ວັຖນະທັມ ສວ່ນປະຊາທິປະໄຕກອ່ນຈະໄດ້ມາຢ່າງຍາກລຳບາກທັງເບີດນີ້ ອາໃສການເວລາອາດຈະມີທາງລັດສຳລັບສັງຄົມອື່ນທີ່ຢາກສ້າງປະຊາທິປະໄຕແບບອະເມຣິກາ ດວ້ຍການສ້າງໂຄງສ້າງຂອງຣະບົບ ດວ້ຍການຂຽນຣັຖທັມນູນແລະກົດໝາຍ ແຕ່ບໍ່ມີທາງລັດສຳຫລັບການສ້າງວັຖນະທັມປະຊາທິປະໄຕໃນເວລາແຫ່ງການເດີນທາງຂອງປະວັດສາດປະຊາທິປະໄຕເທົ່ານັ້ນ ທີ່ຈະເຮັດໃຫ້ສັງຄົມຮຽນຮູ້ຈາກຄວາມລົ້ມເຫລວຜິດພາດໃນອະດີດ ສ່ວນປະຊາທິປະໄຕນັ້ນບໍ່ສາມາດສ້າງໄດ້ໃນວັນ  ນຶ່ງວັນດຽວ-ແຕ່ໃນ-4-ປີຫາ-8-ປີຫຼືຫາ-12-ປີ ເພາະວ່າຜູ້ສ້າງປະຊາທິປະໄຕນັ້ນຄືປະຊາຊົນ ທັ້ງສັງຄົມແລະວັຖນະທັມປະເພນີ ບໍ່ໄຊ້ຜູ້ຮ່າງຣັຖທັມນູນຫຼືຣັຖບານຜູ້ປົກຄອງປະເທດ ພຽງບໍ່ກີ່ຄົນ (- ມີນັກສຶກສາປະຊາທິປະໄຕຄົນສຳຄັນທີ່ສຸດຄົນນຶ່ງ ໃນປະວັດສາດປະຊາທິປະໄຕໃນສະຫະຣັຖອະເມຣິກາ ຄືໜຸ່ມໂສດອາຍຸ-26-ປີ ຄືຊາວຝຣັ່ງເສດ ຊື່-Alexis de Tocqueville-ຊຶ່ງເດີນທາງໄປສຶກສາວິທີຊີວິດສັງຄົມ ແລະກະບວນການປະຊາທິປະໄຕໃນສະຫະຣັຖອະເມຣິກາເມື່ອປີ-1831-ຫລັງຈາກກັບຝຣັ່ງເສສ-Alexis de Tocqueville ທ່ານໄດ້ຂຽນໜັງສືເຫລັ້ມນຶ່ງຊື່ວ່າ-Democracy in America-ຫຼືເວົ້າວ່າປະຊາທິປະໄຕໃນອະເມຣິກາໂດຍທ່ານໄດ້ພິມເຫລັ້ມທີ-1-ໃນປີ-1835-ແລະເຫລັ້ມທີ-2-ໃນປີ-1840-ເປັນເຣື້ອງການສັງເກດແລະສຶກສາວິທີຊີວິດປະຊາທິປະໄຕໃໝ່ໃນດິນແດນອະເມຣິກາ ທີ່ໄດ້ບັນທຶກໃວ້ຢ່າງລະອຽດ ແລະກາຍເປັນງານວັນນະກັມການເມືອງອະມະຕະ ຄົງຢູ່ຄູ່ໂລກປະຊາທິປະໄຕ ມາຈົ່ນທຸກວັນນີ້ -( Alexis de Tocqueville-ຂຽນ -Democeracy in America ເພື່ອໃຫ້ຊາວຝຣັ່ງເສສອ່ານໂດຍສະເພາະ ຫວັງທີ່ຈະໃຫ້ສັງຄົມທີ່ຍັງພະຍາຍາມພັທນາຣະບອບປະຊາທິປະໄຕ ໃນວັຍແຣກເຣີ້ມໃນຝຣັ່ງເສສໄດ້ສຳນຶກວ່າ ທີ່ອະເມຣິການັ້ນການທົດລອງປະຊາທິປະໄຕແບບໃໝ່ ທີ່ໄດ້ໄປພົບເຫັນມານັ້ນນຳໜ້າກົ່ວຝຣັ່ງເສສແລະຍຸໂຣບ ມາກມາຍແລະນານເທິງເຖິງ-700-ປີ ຂອງປະວັດສາດການປົກຄອງຝຣັ່ງເສສຍຸກໃໝ່ ຍັງ ບໍ່ເທົ້າທັນເຣື້ອງເສຣີພາບແລະຄວາມເທົ້າທຽມກັນ ຂອງພົລເມືອງໃນອະເມຣິກາຕົ້ນສັຕວັດທີ-19-( ຫາກວ່າຈະເຣີ້ມເບິ່ງຕັ້ງແຕ່ສັຕວັດທີ-11-ເບິ່ງວ່າ

ເກີດອັນໄດຂຶ້ນໃນຝຣັ່ງເສສ

ຈາກເຄິ່ງ ສັດຕະວັດນຶ່ງໄປສູ່ອີກເຄິ່ງສັດຕະວັດນຶ່ງ ກໍ່ຈະເຫັນຊັດເຈນວ່າປະກົດການປະຕິວັດສັງຄົມຂຶ້ນ ໃນສອງຊົນຊັ້ນພ້ອມໆກັນ ພວກຂຸນນາງແລະຊົນຊັ້ນສູງລົດສະຖານະພາບລົງ ແລ້ວພວກສາມັນຊົນຂະຍັບສະຖານະສູງຂຶ້ນ ແຕ່ວ່າຝ່າຍນຶ່ງລົງ ອີກຝ່າຍນຶ່ງຂຶ້ນທຸກໆຫ້າສິບປີ ສະຖານະການທາງສັງຄົມຂອງຊົນສອງຊັ້ນນີ້ ເຄື້ອນເຂົ້າໃກ້ກັນຫລາຍຂຶ້ນໃນເວລາອີກບໍ່ນານ ສະຖານະຂອງສອງຊັ້ນກໍ່ຈະມາບັນຈົບພົບຄວາມສເມີພາບກັນຈົ່ນໄດ້

Alexis de Tocqueville-ທ່ານໄດ້ຂຽນໃນບົດນຳໃນການພິມຄັ້ງທີ-12-ຂອງ-Democracy in America-ພ້ອມກັບຕັ້ງຂໍ້ສັງເກດເພີ້ມເຕີມວ່າ-( ບໍ່ພຽງແຕ່ສະເພາະໃນຝຣັ່ງເສສເທົ້ານັ້ນ ທີ່ເກີດປະກົດການເຊັ່ນນີ້ ການປະຕິວັດທີ່ນຳໄປສູ່ຄວາມສເມີພາບກັນຂອງຊົນຕ່າງຊັ້ນກາລັງເກີດຂຶ້ນທົ່ວທຸກແຫ່ງໃນໂລກ ຂອງຊາວຄຣິສຕຽນ-9-ເດືອນໃນການສຶກ ສາສັງຄົມປະຊາທິປະໄຕ ໃນອະເມຣິກາແລ້ວສ້າງຄວາມຕື່ນຕາຕື່ນໃຈໃຫ້ກັບທ່ານ-Alexis de Tocqueville-ຢ່າງທີ່ສຸດ ທ່ານ-Alexis de Tocqueville-ໄດ້ຂຽນວ່າ-(ໃນບັນດາສິ່ງສູງຄ່າທີ່ທຳໃຫ້ຂ້າພະເຈົ້າຕື່ນເຕັ້ນສົນໃຈສຶກສາເປັນຢ່າງຫລາຍນັ້ນ ຣະຫວ່າງທີ່ຂ້າພະເຈົ້າຢູ່ໃນສະຫະຣັຖອະເມຣິການັ້ນ ບໍ່ມີເຣື້ອງອັນໃດຈະປະທັບໃຈຍິ່ງໄປກົ່ວເຣື້ອງຄວາມເທົ້າທຽມສເມີກັນ ໂດຍທົ່ວໄປຂອງປະຊາຊົນ ຂ້າພະເຈົ້າໄດ້ຄົ້ນພົບທີ່ວ່າຄວາມຈິງດັ່ງກ່າວນີ້ ມີອິດທິພົນຢ່າງມະຫາສານຕໍ່ການກຳໜົດແລະນຳທາງສັງຄົມ ຄວາມສເມີພາບກຳໜົດທິດທາງຂອງຄວາມຄິດເຫັນສາທາຣະນະ ຄວາມສເມີພາບສ້າງພະລັງອັນຄຶກກອ້ງ ໃຫ້ກັບສຽງບັນຊາຂອງກົດໝາຍຢ່າງບໍ່ເຄີຍພົບເຫັນທີ່ໃດມາເລີຍ ຄວາມສເມີພາບສ້າງກົດເກນໃໝ່ໃຫ້ກັບຜູ້ປົກຄອງແລະຄວາມສເມີພາບສ້າງນິສັຍໃໝ່ກັບຜູ້ຖືກປົກຄອງ

ປະກົດການທາງສັງຄົມການເມືອງ ໃນອະເມຣິການີ້ໜ້າຕື່ນຕາຕື່ນໃຈຍິ່ງນັກ ໃນສາຍຕາຂອງຂ້າຣາຊການໜຸ່ມ ຈາກຣາຊອານາຈັກທີ່ຊົນຊັ້ນສູງ ຕໍ່ສູ້ກັບການປະຕິວັດຂອງມວນສາມັນຊົນມານານກົ່ວ-700-ປີ-( ໃນເວລາບໍ່ນານຂ້າພະເຈົ້າກໍ່ແນມເຫັນວ່າ ອິດທິພົນຂອງເຣື້ອງ ຄວາມສເມີພາບນີ້ໄດ້ແຜ່ໄປກວ້າງໄກ ເກີນກົ່ວເຣື້ອງການເມືອງແລະກົດໝາຍຂອງປະທດສະຫະຣັຖອະເມຣິກາ ອິດທິພົນທີ່ມີຕໍ່ສັງຄົມມີບໍ່ຍິ່ງຫຍ່ອນໄປກົ່ວອິດທິພົນ ເໜືອການເມືອງການປົກຄອງ ຄວາມສເມີພາບກໍ່ສ້າງ
ຄວາມເຫັນອິສຣະຫລວງຫລສຍ ໄດ້ກໍ່ກຳເນີດ

ຄວາມຮູ້ສຶກນຶກຄິດໃຫຍ່ໆ ເຮັດໃຫ້ມີປະເພນີອັນດີງາມ ແມ່ນທີ່ບໍ່ສ້າງໃໝ່ກໍ່ປັບປຸງເສີມແຕ່ງ ວິທີຊີວິດເດີມໃຫ້ສົມບູນຍິ່ງຂຶ້ນ ສໍາຫລັບຂ້າພະເຈົ້າເອງນັ້ນຍິ່ງສຶກສາສັງຄົມອະເມຣິກັນເລິກ ຊຶ້ງຫລາຍຂຶ້ນເທົ່າໄດກໍ່ແຫ່ງຈະຮັບຮູ້ໄປຫລາຍຂຶ້ນເຣື້ອຍໆ ຈົນວ່າເງື່ອນໄຂແຫ່ງການທີ່ສັງ ຄົມ ມີສິດທິສເມີພາບກັນໃນໝູ່ປະຊາຊົນນັ້ນໆ ເປັນຄວາມຈິງພື້ນຖານຂອງການພັທນາ ເຣື້ອງອື່ນໆ ທັງເບີດ ເປັນຫົວໃຈຂອງທຸກສິ່ງທຸກຢ່າງໃນສັງຄົມອະເມຣິກັນ ບໍ່ວ່າແຕ່ຂ້າພະ ເຈົ້າຈະສັງເກດແລະຫາເຫດຜົນຂອງປະກົດການໄດ ໃນສັງຄົມອະເມຣິກັນນັ້ນ ທຸກເຣື້ອງ ມາຈົບລົງທີ່ເຣື້ອງຄວາມສເມີພາບກັນ ໃນສັງຄົມທຸກພາກສວ່ນໄປ

ສ່ວນຣະບອບປະຊາທິປະໄຕ ທີ່ໄຊ້ປົກຄອງຊຸມຊົນທົ່ວສະຫະຣັຖອະເມຣິກາທີ່ທ່ານ Alexis de Tocqueville-ໄດ້ພົບເຫັນໃນປີ-1831-ນັ້ນ-reached the extremelimit-ຫຼື ເຖິງຂອບເຂດທີ່ສຸດແລ້ວ ຂນະທີ່ຢູ່ໃນຍຸໂຣບເວລາດຽວກັນຍັງບໍ່ເຖິງຣະດັບ ຂອງອະເມຣິກາ ແຕ່ກໍ່ນັບໄດ້ວ່າ ກໍາລັງຍົກຣະດັບສູງຂຶ້ນສູ່ພລັງສຸດຍອດແບບດຽວກັນຢ່າງຣວດເຣວ-Alexis de Tocqueville-ທ່ານໄດ້ອະທິບາຍເຖິງແຮງດົນໃຈໃນການຂຽນໜັງສືວິເຄາະ ປະຊາທິປະ ໄຕໃນອະເມຣິກາ-ຂ້າພະເຈົ້າຈະບໍ່ໄດ້ມຸ້ງເບິ່ງອັນໄດໃຫ້ແຕກຕ່າງໄປຈາກຄົນອື່ນ ພຽງແຕ່ຂ້າ ເຈົ້າເບິ່ງອັນໄດໃຫ້ໄກອອກໄປເທົ່ານັ້ນ ໃນຂນະທີ່ໃຜຕໍ່ໃຜຍຸ້ງຢູ່ແຕ່ເຣື້ອງວັນມື້ນີ້ມື້ອື່ນ ແຕ່ຂ້າ ພະເຈົ້າເປົ່ງຄວາມຄດິຂອງຂ້າພະເຈົ້າເອງ ໃຫ້ກັບອະນາຄົດທີ່ໄກໆ ກົວມື້ນີ້ມື້ອື່ນທັງເບີດທັງ ຊົ້ນ-Alexis de Tocqueville-ໄດ້ສຶກສາກະບວນການປະຊາທິປະໄຕໃນອະເມຣິກາ ຕັ້ງແຕ່ ເປັນຍຸກອານານິຄົມແລ້ວໄດ້ພົບຫົວໃຈຫລັກຂອງການສ້າງສັງຄົມ ປະຊາທິປະໄຕໃນອະເມຣິ ກາ ເມື່ອກົ່ວ-350-ປີ ທີ່ຜ່ານມາແລ້ວ ຄື ເສຣີພາບ ກັບ ຄວາມສເມີພາບ ໃນໝູ່ພົລເມືອງຂອງ ຊາວອະເມຣິກາ ໄດ້ສແວງຫາສອງສິ່ງນີ້ ທີ່ໄປມາຕຣອດເວລາຂອງການສ້າງປະເທດຊາດ ແຕ່ສອງສິ່ງທີ່ກ່າວມານີ້ ເປັນສອງສິ່ງທີ່ໄປດວ້ຍກັນບໍ່ໄດ້ຢ່າງກົມກືນ ເພາະຄວາມຂັດແຍ່ງໃນ ຕົວເອງແລະຄວາມຂັດແຍ່ງຣະຫວ່າງກັນ ຖ້າຫາກທ່ານໄດຕອ້ງການເສຣີພາບເຕັມທີ ໃຜເກັ່ງ ໃຜໄດ້ດີ ໃຜຊອກຫາເສຣີພາບພົບໄວກົ່ວໃຜຄົນນັ້ນກໍ່ຕອ້ງໄດ້ກອ່ນ

ສວ່ນເສຣີພາບເຮັດໃຫ້ເກີດຄວາມສເມີພາບໃນໝູ່ມະນຸດ ແຕ່ຄວາມສເມີພາບນັ້ນ ຄື ຫົວໃຈຂອງປະຊາທິປະໄຕ ດັ່ງນັ້ນປະຊາທິປະໄຕໃນອະເມຣິກາ ຈຶ່ງເປັນຄວາມພະຍາຍາມທີ່ຈະ ຕ້ອງປະນີປະນອມ

ຣະຫວ່າງເສຣີພາບກັບຄວາມສເມີພາບກັນ ຢູ່ ຕຣອດເວລາເພາະໂດຍທັມມະຊາດ
ແລ້ວ ເສຣີພາບນຳໄປສູ່ຄວາມບໍ່ສເມີພາບ ສເມີ

ສ່ວນນັກສຶກສາປະຊາທິປະໄຕໃນອະເມຣິກາ ຍຸກປັດຈຸບັນກໍ່ຍັງແນມເຫັນບັນຫາຂັດແຍ້ງ
ແລະການປະນີປະນອມ ຣະຫວ່າງເສຣີພາບກັບຄວາມສເມີພາບຢູ່ຈົ່ນທຸກວັນນີ້ ດັ່ງທີ່ປະກົດ
ຣະຫວ່າງກະບວນການຫາສຽງເລືອກຕັ້ງ ປະທານາທິບໍດີຄົນທີ-44-ຊຶ່ງເປັນການແຂ່ງຂັນ
ຣະຫວ່າງທ່ານ-john McCain ແລະທ່ານ Barack obama

ປະຊາທິປະໄຕໃນອະເມຣິການັ້ນຍັງບໍ່ສົມບູນ ແລະບໍ່ມີປະຊາທິປະໄຕທີ່ໃດໃນໂລກນີ້ ທີ່
ສົມບູນ ແຕ່ປະຊາທິປະໄຕໃນອະເມຣິການັ້ນ ຍ່າງທາງຜ່ານເສັ້ນແບ່ງຣະຫວ່າງການຂາດ
ວັຖຸນະທັມ ປະຊາທິປະໄຕ ຂ້າມເຂົ້າມາສູ່ສັງຄົມທີ່ມີວັຖຸນະທັມປະຊາທິປະໄຕ ຮຽບຮອ້ຍ
ແລ້ວ ແລະບໍ່ມີວັນຖອຍຫລັງກັບຫລັບໄປໄດ້ອີກແລ້ວ ເພາະໃນອະເມຣິການີ້ ຄືວິທີຊີວິດ
ແລະ ວັຖຸນະທັມຂອງສັງຄົມ

ຂ້າພະເຈົ້າຂໍກ່າວ ຕອ້ນນຶ່ງອີກວ່າ ໃນປະເທດທີ່ເປັນປະຊາທິປະໄຕທັງຫລາຍນັ້ນ ຈຳຕອ້ງ
ມີການຣວມຕົວກັນ ຂອງສະມາຄົມຂອງປະຊາຊົນ ເພື່ອປອ້ງກັນອຳນາດຜເດັດການ ຂອງຜູ້
ປົກຄອງທີ່ມີພຽງບໍ່ກີ່ຄົນ ສວ່ນໃນປະເທດທີ່ບໍ່ມີສະມາຄົມທາງການເມືອງນັ້ນ ຂ້າພະເຈົ້າກໍ່ບໍ່
ເຫັນມີມາຕການອັນໃດ ເປັນການຖາວອນທີ່ຊວ່ຍປົກປອ້ງ ປະຊາຊົນຈາກຜູ້ຊີງອຳນາດ ດັ່ງ
ນີ້ແລ້ວ ພົລເມືອງຜູ້ຍິ່ງໃຫ່ຽກໍ່ຈະຖືກກົດຂີ່ຂົ່ມເຫງ ໂດຍຄົນບໍ່ມີກີ່ຄົນ ຫຼືບາງທີມີຄົນໆດຽວ
ກໍ່ກົດຂີ່ຂົ່ມເຫງເອົາປຽບປະຊາຊົນທັງຊາດໄດ້ ເພາະສະນັ້ນ ປະຊາທິປະໄຕຕອ້ງຢູ່ນຳທຸກໆ
ຄົນ ບໍ່ແມ່ນຢູ່ນຳຄົນບາງກຸ່ມຫຼືບາງພັກການເມືອງ ປະເທດຈະ ຈະເຣີນໄດ້ກໍ່ຕອ້ງອາ
ໄຊ້ຣະບອບ ປະຊາທິປະໄຕອັນເປັນທັມ ແກ່ປະຊາຊົນ

ເພາະສະນັ້ນຈຶ່ງໄດ້ກ່າວໃວ້ໃນຂ້າງເທິງນັ້ນວ່າ ປະຊາທິປະໄຕ ກອ່ນຈະໄດ້ມາຕອ້ງຜ່ານ
ທຸກຜ່ານສຸກສາກອ່ນ ແລະຜ່ານດີຜ່ານຊົ່ວໄດ້ສາກອ່ນ

ຈອ່ຍ ອິສຣະ

ທີ່ ນະຄອນວຽງຈັນ

4-11-08-